# ທັກສະການໂຄສະນາເຜີຍແຜ່ກົດໝາຍ ຢູ່ ສປປ ລາວ

# Law advertising skills in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 13

## ອົງການທີ່ຮັບຜິດຊອບ ແລະ ພະນັກງານໂຄສະນາເຜີຍແຜ່ກົດໝາຍ

## Advertising by the state organization and civil servants

### 1. ອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ກົດໝາຍ

### 1.1. ອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ກົດໝາຍ

ອົງການຮັບຜິບຊອບວຽກງານໂຄສະນາເຜີຍແຜ່ກົດໝາຍມີ ສີ່ຂັ້ນ ຄື ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ[1].

- ຂັ້ນສູນກາງ ປະກອບດ້ວຍກະຊວງ, ອົງການຂັ້ນສູນກາງ;
- ຂັ້ນແຂວງປະກອບດ້ວຍພະແນກ, ອົງການຂັ້ນແຂວງ;
- ຂັ້ນເມືອງ ປະກອບດ້ວຍ ຫ້ອງການ, ອົງການຂັ້ນເມືອງ;
- ຂັ້ນບ້ານ ແມ່ນອົງການປົກຄອງບ້ານ.

### 1.2. ສິດ ແລະ ໜ້າທີ່ຂອງອົງການຮັບຜິດຊອບ

ອົງການຮັບຜິດຊອບວຽກງານໂຄສະນາເຜີຍແຜ່ກົດໝາຍມີສິດ ແລະ ໜ້າທີ່ ດັ່ງນີ້[2]:

1) ສ້າງແຜນການ, ແຜນງານ, ໂຄງການ ລວມທັງແຜນງົບປະມານ ທີ່ນໍາໃຊ້ເຂົ້າໃນວຽກງານໂຄສະນາເຜີຍແຜ່ກົດໝາຍ ໃນຂະແໜງການຂອງຕົນ;
2) ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍ;
3) ນໍາໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝເຂົ້າໃນວຽກງານໂຄສະນາເຜີຍແຜ່ ກົດໝາຍ;
4) ແຕ່ງຕັ້ງພະນັກງານໂຄສະນາເຜີຍແຜ່ກົດໝາຍໃນຂະແໜງການຂອງຕົນ;
5) ຄົ້ນຄວ້າ, ກວດແກ້, ຮຽບຮຽງ ເນື້ອໃນ, ກໍານົດຮູບການ, ເປົ້າໝາຍໃນການໂຄສະນາເຜີຍ ແຜ່ກົດໝາຍ;
6) ຈັດກອງປະຊຸມສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານໂຄສະນາເຜີຍແຜ່ກົດໝາຍ;
7) ບໍາລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ໃຫ້ແກ່ພະນັກງານໂຄສະນາເຜີຍແຜ່ກົດໝາຍ;

---

[1] ດໍາລັດ ວ່າດ້ວຍການໂຄສະນາເຜີຍແຜ່ນິຕິກໍາ ປີ 2020, ໝວດທີ 5, ມາດຕາ 36

[2] ດໍາລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກໍາ, ປີ 2020, ມາດຕາ 37

8) ເກັບກຳສະຖິຕິ ແລະ ສະຫຼຸບ ລາຍງານ ການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍປະຈຳເດືອນ, ສາມ ເດືອນ, ຫົກເດືອນ ແລະ ປະຈຳປີ ໃຫ້ຂັ້ນເທິງຂອງຕົນຮັບຊາບ ແລະ ລາຍງານ ປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ປະຈຳປີ ໃຫ້ຂະແໜງການຍຸຕິທຳສະເພາະການເຄື່ອນໄຫວໂຄສະນາ ເຜີຍແຜ່ກົດໝາຍ;

9) ພົວພັນຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງກັບວຽກງານໂຄສະນາເຜີຍແຜ່ກົດໝາຍ ທັງພາຍໃນ ແລະ ຕ່າງປະເທດ;

10) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**1.3. ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1) ຂັດຂວາງການເຄື່ອນໄຫວປະຕິບັດໜ້າທີ່ ຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ ແລະ ແຊກແຊງ ເຂົ້າໃນວຽກງານໂຄສະນາເຜີຍແຜ່ກົດໝາຍ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

2) ສ້າງ ແລະ ຜະລິດສື່ໂຄສະນາເຜີຍແຜ່ກົດໝາຍທຸກປະເພດທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3) ພິມປຶ້ມກົດໝາຍ, ປະມວນກົດໝາຍ, ປຶ້ມສັງລວມກົດໝາຍ ແລະ ປຶ້ມກົດໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງຍຸຕິທຳ;

4) ໃຊ້ຄວາມຮຸນແຮງ, ບັງຄັບ, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ປ້ອຍດ່າ, ໃຊ້ຄວາມທາລຸນຫຍາບຊ້າ, ນາບຂູ່ ຫຼື ທຳຮ້າຍພະນັກງານໂຄສະນາເຜີຍແຜ່ກົດໝາຍ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນທີ່ກ່ຽວຂ້ອງ;

5) ໃຫ້ສິນບົນແກ່ພະນັກງານໂຄສະນາເຜີຍແຜ່ກົດໝາຍ;

6) ປ່ຽນແປງ, ດັດແກ້ເນື້ອໃນກົດໝາຍ ແລະ ລະບຽບການ;

7) ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**2. ພະນັກງານໂຄສະນາເຜີຍແຜ່ກົດໝາຍ**

**2.1. ຄວາມໝາຍ ແລະ ຄວາມສຳຄັນ**

- **ຄວາມໝາຍ**

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ເປັນຂໍ້ວຕໍ່ລະຫວ່າງພັກ-ລັດກັບປະຊາຊົນ, ພະນັກງານເປັນປັດໄຈຕັດສິນຕໍ່ຜົນສຳເລັດຫຼືການປະລາໄຊຂອງການຈັດຕັ້ງປະຕິບັດແນວທາງຂອງພັກແລະກົດໝາຍຂອງລັດ.ສະນັ້ນ, ຜູ້ທີ່ເປັນພະນັກງານຈຶ່ງມີບົດບາດສຳຄັນໃນການໂຄສະນາເຜີຍແຜ່ແນວທາງຂອງພັກແລະກົດໝາຍຂອງລັດ.

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ແມ່ນບຸກຄົນທີ່ມີລະດັບຄວາມຮູ້ກ່ຽວກັບກົດໝາຍໃດໜຶ່ງທີ່ແນ່ນອນ ຊຶ່ງໄດ້ຮັບການແຕ່ງຕັ້ງ ຫຼື ມອບໝາຍຈາກອົງການຈັດຕັ້ງຂອງຕົນໃຫ້ຮັບຜິດຊອບໂຄສະນາເຜີຍແຜ່, ຊີ້ແຈງ, ອະທິບາຍ ແລະ ແນະນຳເນື້ອໃນຂອງກົດໝາຍໃດໜຶ່ງຢ່າງລະອຽດຈະແຈ້ງໃຫ້ແກ່ພົນລະເມືອງໄດ້ຮັບຮູ້.

- **ຄວາມສຳຄັນ**

ການຫັນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍແນວທາງ, ນະໂຍບາຍແລະມະຕິ, ຄຳສັ່ງມາເປັນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນແລະກົດຫມາຍເປັນບາດລ້ຽວສຳຄັນທີ່ສຸດໃຫ້ແກ່ລະບົບການປົກ

ຄອງລັດດ້ວຍກົດໝາຍໝາຍຄວາມວ່າໄດ້ຫັນມາໃຊ້ເຄື່ອງມືໃນການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍລັດຖະທຳມະນູນແລະກົດໝາຍຊຶ່ງເປັນອາວຸດອັນແຫຼມຄົມຂອງພັກແລະລັດໃນການປົກຄອງ;

ກົດໝາຍແລະ ລະບຽບການຕ່າງໆເຖິງວ່າຈະຂຽນລະອຽດ, ມີເນື້ອໃນຮັດກຸມ, ຖືກຕ້ອງແລະສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທຳ-ຮີດຄອງປະເພນີແລະຊີວິດການເປັນຢູ່ຂອງປະຊາຊົນປານໃດກໍຕາມກໍຈະເປັນພຽງແຕ່ເອກະສານບໍ່ມີຄຸນຄ່າແລະບໍ່ມີຄວາມໝາຍຫຍັງໝົດຖ້າວ່າບັນດານິຕິກຳເຫຼົ່ານັ້ນຫາກບໍ່ໄດ້ຮັບການໂຄສະນາເຜີຍແຜ່ໃຫ້ແກ່ພົນລະເມືອງໄດ້ຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດບັນດາກົດໝາຍແລະ ລະບຽບການຕ່າງໆຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບສູງກໍຕໍ່ເມື່ອພະນັກງານໂຄສະນາເຜີຍແຜ່ກົດໝາຍໄດ້ນຳມາອະທິບາຍ, ຊີ້ແຈງເນື້ອໃນຂອງກົດໝາຍຢ່າງລະອຽດຖີ່ຖ້ວນດ້ວຍຮູບການຕ່າງໆ. ເມື່ອສັງຄົມມີຄວາມຮັບຮູ້, ມີຄວາມເຂົ້າໃຈກົດໝາຍແລ້ວກໍຈະມີການປ່ຽນແປງພຶດຕິກຳ, ມີສະຕິກົດໝາຍ;ເມື່ອພົນລະເມືອງມີສະຕິກົດໝາຍຈຶ່ງຈະເຮັດໃຫ້ລັດຖະທຳມະນູນໄດ້ຮັບການເຄົາລົບ, ກົດໝາຍ ຈຶ່ງມີຜົນບັງຄັບແລະປະຕິບັດກົດໝາຍສະເໝີພາບແລະ ຢ່າງເຂັ້ມງວດຊຶ່ງເປັນບ່ອນອີງໃຫ້ແກ່ການປົກຄອງແລະການດຳລົງຊີວິດປະຈຳວັນຂອງບຸກຄົນແລະການຈັດຕັ້ງ.

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ແມ່ນຜູ້ທີ່ມີມີຄວາມຮູ້, ຄວາມສາມາດແລະມີຄວາມສຳຄັນເຮັດໃຫ້ລະບຽບກົດໝາຍໄດ້ຮັບການປະຕິບັດເປັນແຕ່ລະບາດກ້າວ, ເປັນຜູ້ທີ່ມີບົດບາດແລະໜ້າທີ່ອັນສຳຄັນຕໍ່ສັງຄົມ, ອຳນວຍຄວາມສະດວກ, ສະໜອງຂໍ້ມູນຂ່າວສານກ່ຽວກັບກົດໝາຍ ເພື່ອສ້າງສະຕິກົດໝາຍໃຫ້ພົນລະເມືອງ ແນໃສ່ປົກປັກຮັກສາຄວາມຍຸຕິທຳ, ຄວາມສະຫງົບແລະເປັນລະບຽບຮຽບຮ້ອຍ, ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດບ້ານເມືອງໃຫ້ຈະເລີນກ້າວໜ້າ.

### 2.2. ມາດຕະຖານແລະເງື່ອນໄຂຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ

**- ມາດຕະຖານ**

1) ໄດ້ຜ່ານການສຶກສາກົດໝາຍຢ່າງເປັນລະບົບຫຼືໄດ້ຮັບການບຳລຸງ, ຝຶກອົບຮົມກ່ຽວກັບກົດໝາຍ;
2) ໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານໂຄສະນາເຜີຍແຜ່ກົດໝາຍມາກ່ອນ;
3) ມີປະສົບການເຮັດວຽກງານກ່ຽວກັບກົດໝາຍຢ່າງໜ້ອຍ ໜຶ່ງ ປີຂຶ້ນໄປ.

**- ເງື່ອນໄຂ**

1) ຕ້ອງເປັນພົນລະເມືອງລາວ;
2) ເປັນຜູ້ທີ່ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດ, ສິນທຳປະຕິວັດດີ, ມີຈັນຍາບັນ, ຈັນຍາທຳ, ມີຄວາມສັດຊື່ບໍລິສຸດໃນວິຊາຊີບ;
3) ມີຄວາມມັກ-ຮັກຕໍ່ອາຊີບ, ຫ້າວຫັນແລະ ຕັ້ງໃຈຕໍ່ໜ້າທີ່ວຽກງານ;
4) ມີສຸຂະພາບແຂງແຮງດີ.

### 2.3. ສິດ ແລະ ໜ້າທີ່ຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ

ພະນັກງານໂຄສະນາເຜີຍແຜ່ກົດໝາຍ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ສ້າງ ແລະ ສະເໜີແຜນການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍທີ່ຕົນຮັບຜິດຊອບຕໍ່ຂັ້ນເທິງພິຈາລະນາ;
2) ຄົ້ນຄວ້າ, ກະກຽມເນື້ອໃນ, ຮູບການ, ວິທີການ ແລະ ເປົ້າໝາຍໂຄສະນາເຜີຍແຜ່ກົດໝາຍ;
3) ຄົ້ນຄວ້າ, ສ້າງ, ຜະລິດສື່ຕ່າງໆ ເພື່ອຮັບໃຊ້ໃຫ້ແກ່ການໂຄສະນາເຜີຍແຜ່ກົດໝາຍ;
4) ດຳເນີນການໂຄສະນາ, ອະທິບາຍ, ຕອບຂໍ້ຂ້ອງໃຈ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍ;
5) ເກັບກຳ ສະຖິຕິການໂຄສະນາເຜີຍແຜ່ກົດໝາຍໃນຄວາມຮັບຜິດຊອບຂອງຕົນ;
6) ໄດ້ຮັບການສະໜອງຂໍ້ມູນ ຂ່າວສານທາງດ້ານກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວໂຄສະນາເຜີຍແຜ່ກົດໝາຍ;
7) ໄດ້ຮັບການຝຶກອົບຮົມ, ຍົກລະດັບຄວາມຮູ້ທາງດ້ານກົດໝາຍ, ເຕັກນິກ, ທັກສະຂອງການໂຄສະນາເຜີຍແຜ່ກົດໝາຍໃນແຕ່ລະໄລຍະ ລວມທັງການແລກປ່ຽນບົດຮຽນທັງພາຍໃນ ແລະ ຕ່າງປະເທດ;
8) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບວຽກງານໂຄສະນາເຜີຍແຜ່ກົດໝາຍ;
9) ຂໍທິດຊີ້ນຳ, ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກົດໝາຍ ປະຈຳເດືອນ, ສາມ ເດືອນ , ຫົກເດືອນ ແລະ ປະຈຳປີໃຫ້ຂັ້ນເທິງຊາບ;
10) ໄດ້ຮັບນະໂຍບາຍຕາມລະບຽບການ;
11) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### 2.4. ຂໍ້ຫ້າມສຳລັບພະນັກງານໂຄສະນາເຜີແຜ່ກົດໝາຍ

ຫ້າມພະນັກງານໂຄສະນາເຜີຍແຜ່ກົດໝາຍມີພຶດຕິກຳ ດັ່ງນີ້:

1) ໂຄສະນາເຜີຍແຜ່ບິດເບືອນແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2) ໂຄສະນາແບ່ງແຍກຄວາມສາມັກຄີ, ເຈາະຈົງໃສ່ການຈັດຕັ້ງ ຫຼື ບຸກຄົນ;
3) ສະໜອງຂໍ້ມູນ ຂ່າວສານດ້ານກົດໝາຍທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ, ຂັດກັບກົດໝາຍ ແລະ ວັດ ທະນະທຳອັນດີງາມຂອງຊາດ;
4) ສວຍໃຊ້ສິດ, ໜ້າທີ່ຂອງຕົນບັງຄັບ, ນາບຂູ່, ຮັບສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ ຫຼື ການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5) ເປີດເຜີຍຄວາມລັບຂອງຊາດ ແລະ ຄວາມລັບທາງລັດຖະການ;
6) ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### 2.5. ຈັນຍາບັນຂອງພະນັກງານໂຄສະນາເຜີຍແຜ່ກົດໝາຍ

#### 2.5.1. ຈັນຍາບັນຕໍ່ຕົນເອງ

ພະນັກງານໂຄສະນາເຜີຍແຜ່ກົດໝາຍຕ້ອງມີຈັນຍາບັນຕໍ່ຕົນເອງດ້ວຍການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນພະນັກງານໂຄສະນາເຜີຍແຜ່ກົດໝາຍທີ່ດີເດັ່ນ ດັ່ງນີ້[3]:

[3]ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນສະບັບເລກທີ 184/ລບ, ລົງວັນທີ 26ມິຖຸນາ 2019, ມາດຕາ 6.

- ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ອຸດົມການສັງຄົມນິຍົມ, ເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນແລະກົດໝາຍ, ມີຫຼັກໝັ້ນມິດ-ສັດຕູຈະແຈ້ງ, ມີຄວາມບໍລິສຸດແລະມີນໍ້າໃຈເສຍສະລະສູງຕໍ່ປະຊາຊົນແລະເພື່ອປະເທດຊາດ;ມີຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດຕໍ່ການຈັດຕັ້ງ, ເພື່ອຮ່ວມງານ

- ຄອບຄົວ, ສາມັກຄີຮັກແພງ, ຈິງໃຈຕໍ່ກັນແລະມີຄວາມຜູກພັນສະໜິດແໜ້ນກັບມະຫາຊົນ, ປະຊາຊົນບັນດາເຜົ່າ, ເຄົາລົບສິດເປັນເຈົ້າຂອງປະຊາຊົນ, ມີແບບແຜນວິທີດຳລົງຊີວິດທີ່ຖືກຕ້ອງ, ລຽບງ່າຍ, ມີຄວາມຮັບຜິດຊອບສູງຕໍ່ການປະຕິບັດວຽກງານຂອງຕົນທີ່ໄດ້ຮັບມອບໝາຍ, ປະຕິບັດກົງຕໍ່ເວລາແລະດຸໝັ່ນຮໍ່າຮຽນສະແຫວງຫາສິ່ງໃໝ່ໆທີ່ກ້າວໜ້າ.

### 2.5.2. ຈັນຍາບັນຕໍ່ວິຊາຊີບ

ຕ້ອງເຄື່ອນໄຫວວິຊາຊີບຂອງຕົນດ້ວຍຄວາມສັດຊື່ແລະບໍ່ສະແຫວງຫາຜົນປະໂຫຍດໃນທາງທີ່ບໍ່ຖືກຕ້ອງແລະຕ້ອງປະຕິບັດຈັນຍາບັນຂອງຕົນຢ່າງເຂັ້ມງວດດັ່ງນີ້:

1) ປະຕິບັດໜ້າທີ່ໃນການໂຄສະນາເຜີຍແຜ່ກົດໝາຍຕາມແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍແລະລະບຽບການຂອງລັດ;

2) ປະຕິບັດຕາມຫຼັກການວິທະຍາສາດຂອງວິຊາຊີບ, ປະຕິບັດຕາມຕຳແໜ່ງງານແລະຄວາມຮັບຜິດຊອບຂອງຕົນ;

3) ເສີມຂະຫຍາຍແລະພັດທະນາຄວາມຮູ້, ຄວາມສາມາດ, ປະສົບການດ້ານວິຊາຊີບທີ່ຕົນຮັບຜິດຊອບໃຫ້ມີຄວາມກ້າວໜ້າແລະກາຍເປັນມືອາຊີບ;

4) ຄົ້ນຄວ້າ, ວິເຄາະ, ວິໄຈບັນຫາຢ່າງຖືກຕ້ອງຕາມກົດໝາຍ, ຍຶດໝັ້ນຜົນປະໂຫຍດສ່ວນລວມຂອງຊາດແລະຂອງປະຊາຊົນຢ່າງມີຄຸນນະທຳແລະຍຸຕິທຳ;

5) ປະຕິບັດກິດຈະກຳທີ່ກ່ຽວຂ້ອງກັບວຽກງານທີ່ຕົນຮັບຜິດຊອບເພື່ອສ້າງຄວາມເຊື່ອຖື, ຄວາມຈູງໃຈ ແລະໄດ້ຮັບສະໜັກສະໜູນຈາກມະຫາຊົນ, ການຈັດຕັ້ງ;ສ້າງຄວາມເຊື່ອໝັ້ນດ້ວຍຄວາມໂປ່ງໃສ, ສັດຊື່ແລະບໍລິສຸດໃຈໃນການພັດທະນາວິຊາຊີບຂອງຕົນ.

### 2.5.3. ຈັນຍາບັນຕໍ່ການຈັດຕັ້ງ

ຕ້ອງເຄົາລົບແລະມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ຮັກສາຄວາມລັບແລະປະຕິບັດລະບຽບວິໄນຂອງການຈັດຕັ້ງຢ່າງເຂັ້ມງວດດັ່ງນີ້:

1) ປະພຶດແລະເຄື່ອນໄຫວວຽກງານຕາມພາລະບົດບາດ, ສິດແລະໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນດ້ວຍຄວາມສຸດຈະລິດ, ສະເໝີພາບແລະປາສະຈາກອະຄະຕິ;

2) ປະຕິບັດໜ້າທີ່ວຽກງານຢ່າງມີຫົວຄິດປະດິດສ້າງ, ທຸ້ມເທເຫື່ອແຮງແລະສະຕິປັນຍາຂອງຕົນຢ່າງສຸດຄວາມສາມາດເຂົ້າໃນການປະຕິບັດໜ້າທີ່, ຮອບຄອບ, ວ່ອງໄວ, ປອດໃສ, ຖືກຕ້ອງ, ສົມເຫດສົມຜົນເພື່ອປົກປ້ອງກຽດສັກສີຂອງຕົນ ແລະ ການຈັດຕັ້ງບ, ຖືເອົາຜົນປະໂຫຍດຂອງຊາດ, ຂອງການຈັດຕັ້ງແລະປະຊາຊົນເປັນສຳຄັນ;

3) ໃຊ້ເວລາທາງລັດຖະການໃຫ້ເກີດຜົນປະໂຫຍດສູງສຸດແກ່ການຈັດຕັ້ງ;

4) ປົກປັກຮັກສາ, ຄຸ້ມຄອງແລະນຳໃຊ້ຊັບສິນຂອງລັດ, ຂອງລວມໝູ່ໃຫ້ຖືກຕ້ອງແລະມີປະສິດທິພາບສູງສຸດ;

5) ບໍ່ສວຍໃຊ້ໜ້າທີ່, ຕຳແໜ່ງເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ຄອບຄົວ, ຍາດພີ່ນ້ອງແລະພັກພວກ;

6) ໂຄສະນາເຜີຍແຜ່, ຖາມ-ຕອບ, ປະກອບຄຳເຫັນຢ່າງມີຫຼັກການ, ມີລັກສະນະສ້າງສັນ, ຈິງໃຈແລະມີເຫດມີຜົນຕາມຫຼັກການຂອງພັກ, ກົດໝາຍຂອງລັດ;

7) ໃຫ້ກຽດແລະເຄົາລົບນັບຖືເຊິ່ງກັນແລະ ກັນ, ບໍ່ກ້າວກ່າຍພາລະບົດບາດ, ສິດແລະໜ້າທີ່ຄວາມຮັບຜິດຊອບຂອງກັນແລະກັນ;

8) ຂໍທິດຊີ້ນຳ, ຮັບຟັງຄຳຄິດເຫັນຂອງການຈັດຕັ້ງເພື່ອປັບປຸງທັດສະນະຄະຕິ, ການປະພຶດແລະໜ້າທີ່ວຽກງານທີ່ຮັບຜິດຊອບ;

9) ປະຕິບັດຫຼັກການລວມສູນປະຊາທິປະໄຕ, ເອກະພາບໃນການເຄື່ອນໄຫວວຽກງານ.

**2.5.4. ຈັນຍາບັນຕໍ່ປະຊາຊົນແລະສັງຄົມ**

ພະນັກງານໂຄສະນາເຜີຍແຜ່ກົດໝາຍຕ້ອງບໍລິການ, ຮັບໃຊ້ປະຊາຊົນແລະສັງຄົມດ້ວຍຄວາມຈິງໃຈ, ສະເໝີພາບ, ໂປ່ງໃສ, ມີກິລິຍາມາລະຍາດດີ, ຖະໜອມຖ່ອມຕົວ, ບໍ່ຮຽກຮ້ອງສິ່ງຕອບແທນແລະບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ປະຊາຊົນແລະສັງຄົມໃນເວລາປະຕິບັດໜ້າທີ່ວຽກງານດັ່ງນີ້:

1) ມີນ້ຳໃຈເສຍສະລະຮັບໃຊ້ປະຊາຊົນດ້ວຍຄວາມຈິງໃຈ, ວ່ອງໄວ, ໂປ່ງໃສແລະຍຸຕິທຳໂດຍບໍ່ຈຳແນກແພດ, ເຜົ່າ, ຖານະທາງສັງຄົມ, ລະດັບການສຶກສາແລະຄວາມເຊື່ອຖື;

2) ມີທັດສະນະຄະຕິອ່ອນໂຍນ, ສຸພາບຮຽບຮ້ອຍ, ມີກິລິຍາມາລະຍາດວາຈາອ່ອນຫວານແລະສາມາດຄວບຄຸມອາລົມໄດ້ດີ;

3) ອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໄດ້ຮັບຮູ້, ເຂົ້າໃຈເນື້ອໃນຂອງກົດໝາຍພ້ອມທັງສະໜອງຂໍ້ມູນຂ່າວສານທາງດ້ານກົດໝາຍໃຫ້ປະຊາຊົນ;

4) ບໍ່ສວຍໃຊ້ໜ້າທີ່ຂອງຕົນ ເພື່ອຂົ່ມຂູ່, ຮຽກຮ້ອງຄ່າຕອບແທນຫຼືຫາຜົນປະໂຫຍດໃດໜຶ່ງໃຫ້ແກ່ຕົນເອງ, ຍາດພີ່ນ້ອງ, ພັກພວກຫຼືອົງການຈັດຕັ້ງຂອງຕົນ.

- **References:**

1. ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ປີ 2020;
2. ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນສະບັບເລກທີ 184/ລບ, ລົງວັນທີ 26ມິຖຸນາ 2019;
3. ປະມວນເອກະສານຝຶກອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ສະຖາບັນຍຸຕິທຳແຫ່ງຊາດ, ສປປລາວ, ປີ 2020;
4. ປຶ້ມໂຄສະນາເຜີຍແຜ່ກົດໝາຍ, ຈັດພິມໂດຍ ກົມໂຄສະນາເຜີຍແຜ່ກົດໝາຍ, ກະຊວງຍຸຕິທຳ ສປປ ລາວ, ປີ 2022;
5. ປອ. ຈອມຄຳບຸບຜາລີວັນ, ປຶ້ມຄູ່ມື ວຽກງານເຜີຍແຜ່, ສຶກສາອົບຮົມກົດໝາຍ, ປີ 2008.